ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງຊວງແຜນການ ແລະການລົງທຶນ

ຫ້ອງການ

ເລກທີ 3445 /ກຜທ.ຫກ5

ນະຄອນຫຼວງວຽງຈັນ, ວັນທີ 28 ພະຈິກ 2024

## ໜັງສືເຊີນເຂົ້າຮ່ວມການສົມທຽບລາຄາ

**ຮຽນ:** ບັນດາບໍລິສັດ ຫຼື ຫ້າງຮ້ານ ທີ່ນັບຖື

**ເລື່ອງ: ເຊີນເຂົ້າຮ່ວມແຂ່ງຂັນສົມທຽບລາຄາ ການສະໜອງເຄື່ອງເຊົ່າອັດເອກະສານ (photocopy) ໃນຮູບແບບມອບເໝົາ ໃຫ້ກັບກະຊວງແຜນການ ແລະ ການລົງທຶນ ປະຈໍາປີ 2025.**

1. ຫ້ອງການກະຊວງແຜນການ ແລະ ການລົງທຶນ ໄດ້ຮັບອະນຸມັດງົບປະມານຂອງລັດ ປະຈໍາປີ 2025 ເພື່ອດໍາເນີນການ ສະໜອງເຄື່ອງເຊົ່າອັດເອກະສານ (photocopy)ໃນຮູບແບບມອບເໝົາໃຫ້ກັບກະຊວງແຜນການ ແລະ ການລົງທຶນ ດ້ວຍການປະມູນສົມທຽບລາຄາ.
2. ຫ້ອງການກະຊວງແຜນການ ແລະ ການລົງທຶນ ຂໍຮຽນເຊີນບໍລິສັດຂອງທ່ານ ເຂົ້າຍື່ນຊອງສົມທຽບລາຄາ **ເຄື່ອງເຊົ່າອັດເອກະສານ (photocopy)** ປະຈໍາປີ 2025 ໃຫ້ແກ່ກະຊວງແຜນການ ແລະ ການລົງທຶນ.
3. ການສົມທຽບລາຄາຄັ້ງນີ້ ແມ່ນຈະດໍາເນີນຕາມຂັ້ນຕອນການປະມູນສົມທຽບລາຄາ ທີ່ໄດ້ກໍານົດໄວ້ຢູ່ໃນກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ສະບັບເລກທີ 30/ສພຊ, ລົງວັນທີ 2 ພະຈິກ 2017 ແລະ ຄໍາແນະນໍາກ່ຽວກັບການຈັດຕັ້ງປະຕິບັດ ກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ຂອງກະຊວງການເງິນ ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019.
4. ກໍານົດສົ່ງຊອງສົມທຽບລາຄາ ຕ້ອງສົ່ງໃຫ້ພະແນກເຕັກໂນໂລຊີ ແລະ ຂໍ້ມູນຂ່າວສານ ຫ້ອງການກະຊວງແຜນການ ແລະ ການລົງທຶນ ກ່ອນເວລາ 13:00 ໂມງ ຂອງວັນທີ 13 ທັນວາ 2024, ຖ້າຊອງໃດສົ່ງຊ້າກ່ວາເວລາທີ່ກໍານົດໄວ້ຈະບໍ່ຮັບເອົາ ແລະຈະສົ່ງຄືນໂດຍບໍ່ມີການເປີດຊອງດັ່ງກ່າວ.
5. ທຸກໆຊອງສົມທຽບລາຄາແມ່ນຈະໄດ້ເປີດເວລາ 14:00 ໂມງ ຂອງວັນທີ 13 ທັນວາ 2024, ທີ່ຫ້ອງປະຊຸມ A1-1 ກະຊວງແຜນການ ແລະ ການລົງທຶນ, ໂດຍຊ້ອງໜ້າຄະນະຮັບຜິດຊອບສົມທຽບລາຄາ ແລະ ຕົວແທນຂອງຜູ້ສົມທຽບລາຄາ ທີ່ສົນໃຈຕ້ອງການເຂົ້າຮ່ວມ.

**ຫົວໜ້າຫ້ອງການ**

ອຸດຕະແກ້ວ ແກ້ວດວງສົນ

ຕິດຕໍ່ພົວພັນ

ພະແນກເຕັກໂນໂລຊີ ແລະ ຂໍ້ມູນຂ່າວສານ

ໂທ: 020 55553594.

สแกนด้วย CamScanner

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງຊວງແຜນການ ແລະການລົງທຶນ

ຫ້ອງການ

ນະຄອນຫຼວງວຽງຈັນ, ວັນທີ 28.11.2024

## ຕາຕະລາງປະມູນເຄື່ອງເຊົ່າອັດເອກະສານ (photocopy)
## ໃນຮູບແບບມອບເໝົາ ປະຈຳປີ 2025

| ລຳດັບ | ລາຍການ | ຫົວໜ່ວຍ | ຈຳນວນ | ລາຄາເງິນໂອນຕໍ່ເດືອນຕໍ່ເຄື່ອງ | ລາຄາເງິນໂອນຕໍ່ປີ |
|---|---|---|---|---|---|
| 1 | ເຄື່ອງອັດເອກະສານຂາວ-ດຳ:<br>- ສາມາດກັອບປີ, ສະແກນ, ແຟັກ, ອີເມວ, Wifi, ສາມາດພິມ 2 ໜ້າພ້ອມກັນ.<br>- ສາມາດປິ້ນຜ່ານຄອມພິວເຕີ, ຜ່ານມືຖື ແລະ ສາມາດສຳເນົາຈັດລຽງແຍກເປັນຊຸດໄດ້.<br>-ສາມາດຮັບຮອງລະບົບເນັດເວີກ, ກຳນົດ User ຜູ້ໃຊ້ໄດ້ ແລະ ສາມາດຮັບຮອງເຈ້ຍ A5-A4-A3-F14 ແລະ ຂະໜາດອື່ນໆໄດ້.<br>- | ເຄື່ອງ | 8 | | |
| ລວມເປັນເງິນ | | | | | |
| ອາກອນມູນຄ່າເພີ່ມ VAT 10% | | | | | |
| ລວມເປັນເງິນໂອນທັງໝົດ | | | | | |

ຫົວໜ້າຫ້ອງການ

ອຸຕະແກ້ວ ແກ້ວດວງສິນ

สแกนด้วย CamScanner